Lao | April 2003 | [DOH-6230]

NSW STATEWIDE INFANT SCREENING – HEARING (SWISH) PROGRAM

# Why does my baby need a repeat hearing screen?



## ເປັນຫຍັງເດັກຂອງຂ້າພະເຈົ້າຕ້ອງໄດ້ກວດການຟັງສຽງທົ່ວໄປຊ້ຳຄືນອີກ?

ເດັກເກີດໃໝ່ຫຼາຍຄົນຕ້ອງໄດ້ກວດການຟັງສຽງທົ່ວໄປຊ້ຳຄືນອີກ. ມັນບໍ່ແມ່ນໄດ້ຈຳເປັນໝາຍຄວາມວ່າ ເດັກທ່ານມີການບົກຜ່ອງເຣື່ອງການຟັງສຽງ. ອາດມີເຫດຜົນຕ່າງໆອັນອື່ນກໍເປັນໄດ້ສຳລັບການກວດທົ່ວໄປຄືນອີກ.

ເຫດຜົນຕ່າງໆທົ່ວໄປສ່ວນມາກຊຶ່ງເຮັດໃຫ້ມີການກວດຊ້ຳຄືນອີກແມ່ນ:

- ເດັກຂອງທ່ານອາດວຸ່ນວາຍຕ່ອນເວລາກວດກໍເປັນໄດ້
- ມີທາດນ້ຳຫຼືວ່າມີຫຍັງຕັນຊົ່ວຄາວໃນຫູຂອງເດັກທ່ານຫຼັງຈາກເກີດ.

ໃນກໍລະນີທົ່ວໄປສ່ວນມາກ ການກວດການຟັງສຽງທົ່ວໄປຊ້ຳຄືນອີກນັ້ນ ຈະໄດ້ກະທຳກ່ອນທ່ານແລະເດັກຂອງທ່ານອອກຈາກໂຮງໝໍ. ຖ້າວ່າເປັນໄປບໍ່ໄດ້ ຕ່ອນເວລາທ່ານຢູ່ໃນໂຮງໝໍ, ທ່ານຈະໄດ້ຮັບການສເນີໃຫ້ມີການກວດເບິ່ງການຟັງສຽງຊ້ຳຄືນອີກຕໍ່ເດັກຂອງທ່ານ ແບບແມ່ນຄົນໄຂ້ຂ້າງນອກ ຫຼືວ່າຢູ່ຈຸດຊຸມຊົນຫ້ອງຖິ່ນບ່ອນໃດບ່ອນນຶ່ງ, ໃນເວລາບໍ່ດົນຫຼັງຈາກອະນຸຍາດໃຫ້ອອກຈາກໂຮງໝໍ.

ບຸກຄົນຜູ້ທີ່ເອົາໜັງສືເຫຼັ້ມນ້ອຍນີ້ໃຫ້ທ່ານຈະໃຫ້ຄຳແນະນຳຕໍ່ທ່ານ ວ່າການກວດການຟັງສຽງຊ້ຳຄືນອີກນັ້ນຈະມີຂຶ້ນຍາມໃດແລະຢູ່ໃສ.

ຜົນຂອງການກວດການຟັງສຽງຊ້ຳຄືນອີກນັ້ນ ຈະໄດ້ມີການເວົ້າລົມກັບທ່ານຕ່ອນເວລາກວດນັ້ນ.

ຖ້າວ່າການກວດການຟັງສຽງຊ້ຳຄືນອີກນັ້ນບໍ່ສະແດງໃຫ້ເຫັນຜົນອັນໃດອັນນຶ່ງຢ່າງແຈ່ມແຈ້ງ, ເດັກຂອງທ່ານຈະໄດ້ຖືກສົ່ງໃຫ້ໄປກວດເບິ່ງອາການເຣື່ອງການຟັງສຽງກັບຜູ້ຊຳນານການຟັງສຽງ.

**ສຳລັບລາຍລະອຽດເພີ້ມຕິດຕໍ່ຫາ:**

SWISH Information Line
Freecall 1800 551 175
NSW Department of Health
Tel. (02) 9391 9000
Fax. (02) 9391 9101
NSW HealthWeb site: www.health.nsw.gov.au

© NSW Health Department 2002

November 2002 SHPN (PHCC) 030087
[Lao]

NSW HEALTH
Working as a Team